# ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ








## ຜົນກະທົບຕໍ່ສິ່ງແວດລ້ອມຈາກ ການກໍ່ສ້າງ ແລະ ສ້ອມແປງ

**ມາດຕາ 10** ບຸກຄົນ, ການຈັດຕັ້ງທີ່ດຳເນີນການກໍ່ສ້າງຫລືການສ້ອມແປງເຊັ່ນ: ຖະໜົນຫົນທາງ, ຂົວ, ລະບົບນ້ຳປະປາ, ການສ້ອມແປງ, ອັດສິດ, ຕາໜ່າງໄຫລະຄົມມະນາຄົມ, ໄຟຟ້າ ແລະ ສິ່ງປຸກສ້າງຕ່າງໆ ຕ້ອງມີວິທີການປ້ອງກັນອັນຕະລາຍທີ່ຈະເກີດຂຶ້ນ ພ້ອມທັງມີມາດຕະການສະກັດກັ້ນ ແລະ ແກ້ໄຂບັນຫາທີ່ກໍ່ໃຫ້ເກີດມີ ຄວັນ, ຝຸ່ນລະອອງ,ຄວາມສັ່ນສະເທືອນ, ແສງ,ສີ, ສຽງ ແລະ ກິ່ນ ສິ່ງເສດເຫລືອ ແລະ ສິ່ງກີດຂວາງຕ່າງໆ ໃຫ້ໄດ້ຕາມມາດຖານ ລະບຽບການທີ່ຂະແໜງກ່ຽວຂ້ອງ ແລະ ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.